ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ສຳເລັດພິທີປະກາດການປັບປຸງການຈັດຕັ້ງພາຍໃນ ທຫລ




ໃນຕອນບ່າຍຂອງວັນທີ 19 ມັງກອນ 2022 ຢູ່ທີ່ສຳນັກງານທະນາຄານແຫ່ງ ສປປ ລາວ ໄດ້ຈັດພິທີປະກາດການປັບປຸງການຈັດຕັ້ງພາຍໃນທະນາຄານແຫ່ງ ສປປ ລາວ ຂຶ້ນ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ເລຂາຄະນະພັກ, ຜູ້ວ່າການ ທຫລ ແລະ ມີຜູ້ເຂົ້າຮ່ວມຈາກ 5 ກົມກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ເພັດສະຖາພອນ ແກ້ວວົງວິຈິດ ຫົວໜ້າຫ້ອງການ ທຫລ ຂຶ້ນລາຍງານສະພາບໂດຍຫຍໍ້ການເຄື່ອນໄຫວວຽກງານປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງ 5 ກົມກອງຄື: ຫ້ອງການ ທຫລ, ກົມກວດກາ, ກົມຈັດຕັ້ງແລະພະນັກງານ, ກົມຮ່ວມມືສາກົນ ແລະ ສຳນັກງານ ຄຄຊ. ຫລັງຈາກນັ້ນ, ທ່ານ ພານຸສັກ ແກ່ນວົງພະຈັນ ຄະນະພັກ ທຫລ, ຫົວໜ້າກົມຈັດຕັ້ງແລະພະນັກງານ ໄດ້ຂຶ້ນປະກາດການຕົກລົງຂອງຂັ້ນເທິງກ່ຽວກັບການປັບປຸງການຈັດຕັ້ງ ເຊິ່ງປະກອບມີ: ທ່ານ ນ. ຟອງຈິນດາ ແສງສຸລິວົງ ຫົວໜ້າກົມຮ່ວມມືສາກົນ ຖືກແຕ່ງຕັ້ງເປັນຫົວໜ້າສຳນັກງານ ຄຄຊ, ທ່ານ ນ. ຈັນສຸກ ພົມມະວັນ ອະດີດຮອງຫົວໜ້າກົມກວດກາ ອອກພັກການ-ຮັບອຸດໜູນບຳນານ, ທ່ານ ນ. ພູມມະລີ ສີຣິພົນເດດ ຮອງຫົວໜ້າກົມຮ່ວມມືສາກົນ ຖືກແຕ່ງຕັ້ງເປັນ ຮອງຫົວໜ້າກົມຈັດຕັ້ງແລະພະນັກງານ, ທ່ານ ຈິດຕະກອນ ຈິດຕະພົງ ເລຂາຜູ້ວ່າການ ທຫລ ຖືກແຕ່ງຕັ້ງເປັນ ຮອງຫົວໜ້າຫ້ອງການ ທຫລ.



ເພື່ອເຮັດໃຫ້ພິທີປະກາດການຈັດຕັ້ງມີຄວາມໝາຍສຳຄັນ ແລະ ມີເນື້ອໃນໜັກແໜ້ນເລິກເຊິ່ງ, ທ່ານ ສອນໄຊ ສິດພະໄຊ ຜູ້ອໍານວຍການ ທຫລ ໄດ້ໃຫ້ກຽດມີຄວາມເຫັນໂອ້ລົມຕໍ່ພິທີໃນຄັ້ງນີ້ວ່າ: ເນື້ອໃນຂອງພິທີໃນຄັ້ງນີ້ ແມ່ນສຸດທີ່ມີຄວາມໝາຍຄວາມສໍາຄັນຕໍ່ວຽກງານລວມຂອງຂະແໜງທະນາຄານການຈັດຕັ້ງພວກເຮົາ ທີ່ໄດ້ມີການປະກາດການປັບປຸງການຈັດຕັ້ງຢູ່ຫຼາຍກົມກອງ, ໃນນັ້ນມີທັງການປະກາດໃຫ້ພະນັກງານຫຼັກແຫຼ່ງ ທີ່ມີເງື່ອນໄຂອອກພັກການ-ຮັບເບ້ຍບໍານານ, ການສັບປ່ຽນໜ້າທີ່ບ່ອນປະຈໍາການ ແລະ ການເລື່ອນຕໍາແໜ່ງໜ້າທີ່ຄວາມຮັບຜິດຊອບທີ່ສູງຂຶ້ນ, ຊຶ່ງທັງໝົດການປັບປຸງນີ້ກໍ່ແມ່ນພວກເຮົາປະຕິບັດຕາມແນວທາງນະໂຍບາຍ ກໍ່ຄືລະບຽບຫຼັກການຂອງພັກ-ລັດ ແລະ ບົນພື້ນຖານຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ວຽກງານໃນໄລຍະນີ້. ການປັບປຸງການຈັດຕັ້ງເທື່ອນີ້ ບໍ່ແມ່ນເລື່ອງແປກສໍາລັບການຈັດຕັ້ງພວກເຮົາ ເນື່ອງຈາກວ່າແມ່ນວຽກປົກກະຕິຂອງວຽກງານພະນັກງານ ແລະ ມັນກໍ່ແມ່ນຄວາມຈໍາເປັນພາວະວິໄສ ທີ່ຈະຕ້ອງໄດ້ມີການປະຕິບັດຕາມນະໂຍບາຍ, ມີການປັບປຸງສັບຊ້ອນ, ມີການຈັດວາງພະນັກງານໃນຂັ້ນຕ່າງໆໃຫ້ສອດຄ່ອງກັບລະບຽບຫຼັກການ, ກັບມາດຕະຖານຂອງພະນັກງານ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານ ເພື່ອແນໃສ່ຮັບປະກັນໃຫ້ແກ່ການປະຕິບັດໜ້າທີ່ການເມືອງໃນແຕ່ລະໄລຍະ;

ທ່ານຜູ້ອໍານວຍການ ທຫລ ຍັງໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ແລະ ຕີລາຄາສູງ ຕໍ່ການປະກອບສ່ວນຂອງສະຫາຍ ນ. ຈັນສຸກ ພົມມະວັນ ທີ່ໄດ້ຮັບນະໂຍບາຍໃຫ້ອອກພັກການ-ຮັບເບ້ຍບໍານານ ທີ່ໄດ້ເປັນເຈົ້າການຢ່າງແທ້ຈິງໃນການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ໃນໄລຍະຜ່ານມາ ແລະ ບັນດາສະຫາຍ ທີ່ໄດ້ຮັບການປັບປຸງໃໝ່.

#ຂ່າວ ແລະ ພາບ: ນ. ປາໄນ ພັນທະລາ